**ໝວດທີ 1 ........................................................ 8**

**ບົດບັນຍັດທົ່ວໄປ ........................................................ 8**

ມາດຕາ 1. ຈຸດປະສົງ ........................................................ 8

ມາດຕາ 2. ວິຈິດສິນ ........................................................ 8

ມາດຕາ 3. ການອະທິບາຍຄຳສັບ ........................................................ 8

ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບວຽກງານວິຈິດສິນ ........................................................ 11

ມາດຕາ 5. ຫຼັກການເຄື່ອນໄຫວວຽກງານວິຈິດສິນ ........................................................ 12

ມາດຕາ 6. ສິດ ແລະ ພັນທະຂອງພົນລະເມືອງລາວ ........................................................ 12

ມາດຕາ 7. ການຮ່ວມມືສາກົນ ........................................................ 13

ມາດຕາ 8. ຂອບເຂດການນຳໃຊ້ດຳລັດ ........................................................ 13

**ໝວດທີ 2 ........................................................ 13**

**ປະເພດ ແລະ ລັກສະນະຂອງວິຈິດສິນ ........................................................ 13**

ມາດຕາ 9. ປະເພດວິຈິດສິນ ........................................................ 13

ມາດຕາ 10. ຈິດຕະກຳ ........................................................ 13

ມາດຕາ 11. ປະຕິມາກຳ ........................................................ 14

ມາດຕາ 12. ສິລະປະພາບພິມ ........................................................ 14

ມາດຕາ 13. ການອອກແບບງານສິນ ..........................................14
ມາດຕາ 14. ລັກສະນະວິຈິດສິນ..............................................14
ມາດຕາ 15. ວິຈິດສິນພື້ນເມືອງ ............................................14
ມາດຕາ 16. ວິຈິດສິນຮ່ວມສະໄໝ..........................................15
ມາດຕາ 17. ວິຈິດສິນແບບສ້າງສັນ .......................................15
**ໝວດທີ 3** ............................................................ **15**
**ການດຳເນີນທຸລະກິດກ່ຽວກັບວຽກງານວິຈິດສິນ** ....................... **15**
ມາດຕາ 18. ການດຳເນີນທຸລະກິດກ່ຽວກັບວິຈິດສິນ.........................15
ມາດຕາ 19. ເງື່ອນໄຂດຳເນີນກິດຈະການກ່ຽວກັບວຽກງານວິຈິດສິນ ...16
ມາດຕາ 20. ການຄົ້ນຄວ້າວິໄຈ................................................16
ມາດຕາ 21. ການສົ່ງອອກນອກປະເທດເພື່ອວິໄຈ ..........................17
ມາດຕາ 22. ການສົ່ງອອກ-ການນຳເຂົ້າ, ໂຄສະນາເຜີຍແຜ່ ຫຼື ຈຳໜ່າຍ ........................................................................17
ມາດຕາ 23. ການຊື້, ຂາຍ, ໂອນ ແລະ ການສືບທອດ..................17
**ໝວດທີ 4** ............................................................ **18**
**ການແຂ່ງຂັນສ້າງຜົນງານດ້ານວິຈິດສິນແລະການວາງສະແດງ** . **18**

ມາດຕາ 24. ເປົ້າໝາຍການແຂ່ງຂັນ ສ້າງຜົນງານດ້ານວິຈິດສິນ........18
ມາດຕາ 25. ການແຂ່ງຂັນສ້າງຜົນງານດ້ານວິຈິດສິນ ......................18
ມາດຕາ 26. ການວາງສະແດງ ..................................................19
ມາດຕາ 27. ສະຖານທີ່ວາງສະແດງ ............................................19
ມາດຕາ 28. ສິດໃນການອະນຸຍາດໃຫ້ວາງສະແດງ .........................20
**ໝວດທີ 5** ............................................................................ **20**
**ປະເພດນັກສິລະປິນວິຈິດສິນ** ...................................................... **20**
ມາດຕາ 29. ປະເພດນັກສິລະປິນວິຈິດສິນ....................................20
ມາດຕາ 30. ນັກວິຈິດຕະກອນ....................................................20
ມາດຕາ 31. ນັກປະຕິມາກອນ....................................................21
ມາດຕາ 32. ນັກຖ່າຍພາບສິນ ....................................................21
ມາດຕາ 33. ສິດ, ພັນທະ ແລະ ໜ້າທີ່ຂອງນັກສິນລະປິນວິຈິດສິນ....21
**ໝວດທີ 6** ............................................................................ **22**
**ຄ່າທຳນຽມ ແລະ ຄ່າບໍລິການ** ...................................................... **22**
ມາດຕາ 34. ຄ່າທຳນຽມ ແລະ ຄ່າບໍລິການ....................................22
**ໝວດທີ 7** ............................................................................ **22**

**ຂໍ້ຫ້າມ** ........................................................................ 22

ມາດຕາ 35. ຂໍ້ຫ້າມທົ່ວໄປ ........................................................ 22

ມາດຕາ 36. ຂໍ້ຫ້າມສຳລັບພະນັກງານຂອງລັດ ................................ 23

**ໝວດທີ 8** ........................................................................ 24

**ການແກ້ໄຂຂໍ້ຂັດແຍ່ງ** ........................................................ 24

ມາດຕາ 37. ຮູບການແກ້ໄຂຂໍ້ຂັດແຍ່ງ ......................................... 24

ມາດຕາ 38. ການປະນີປະນອມ ..................................................... 24

ມາດຕາ 39. ການແກ້ໄຂທາງດ້ານບໍລິຫານ ..................................... 25

ມາດຕາ 40. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງ ດ້ານເສດຖະກິດ ........................................................................ 25

ມາດຕາ 41. ການແກ້ໄຂໂດຍສານປະຊາຊົນ .................................... 25

ມາດຕາ 42. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ ...................... 25

**ໝວດທີ 9** ........................................................................ 25

**ການຄຸ້ມຄອງວຽກງານວິຈິດສິນ** ............................................... 25

ມາດຕາ 43. ຄວາມຮັບຜິດຊອບຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ...................................................... 25

ມາດຕາ 44. ຄວາມຮັບຜິດຊອບຂອງພະແນກຖະແຫຼງຂ່າວ, ວັດທະນະ ທຳ ແລະທ່ອງທ່ຽວແຂວງ, ນະຄອນຫຼວງ.......................................27

ມາດຕາ 45. ຄວາມຮັບຜິດຊອບຂອງຫ້ອງການຖະແຫຼງຂ່າວ, ວັດທະນະ ທຳ ແລະທ່ອງທ່ຽວເມືອງ, ເທດສະບານແລະນະຄອນ........................29

ມາດຕາ 46. ສະມາຄົມວິຈິດສິນລາວ............................................30

**ໝວດທີ 10 ........................................................................ 30**

**ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ.......... 30**

ມາດຕາ 47. ນະໂຍບາຍຕໍ່ຜູ່ມີຜົນງານ...........................................30

ມາດຕາ 48. ມາດຕະການຕໍ່ຜູ້ລະເມີດ ..........................................30

**ໝວດທີ 11 ........................................................................ 31**

**ວັນວິຈິດສິນແຫ່ງຊາດ,ເຄື່ອງໝາຍແລະຕາປະທັບ..................... 31**

ມາດຕາ 49. ວັນວິຈິດສິນແຫ່ງຊາດ ..............................................31

ມາດຕາ 50. ເຄື່ອງໝາຍແລະຕາປະທັບຂອງວິຈິດສິນ .....................31

**ໝວດທີ 12 ........................................................................ 31**

**ບົດສຸດທ້າຍ.......................................................................... 31**

ມາດຕາ 51. ການຈັດຕັ້ງປະຕິບັດ.................................................31

ມາດຕາ 52. ຜົນສັກສິດ ........................................................32

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ                                        ເລກທີ 217 / ລບ

ນະຄອນຫຼວງວຽງຈັນ, ວັນທີ 09.07.2016

# ດຳລັດ
# ວ່າດ້ວຍວິຈິດສິນ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປລາວ ສະບັບເລກທີ 69 /ສພຊ, ລົງວັນທີ 15 **ທັນວາ** 2015;
- ອີງຕາມກົດໝາຍ ວ່າດ້ວຍຫັດຖະກຳ ສະບັບເລກທີ **02 /**ສພຊ, ລົງວັນທີ **25** ກໍລະກົດ **2008;**
- ອີງຕາມກົດໝາຍ ວ່າດ້ວຍມໍລະດົກແຫ່ງຊາດ ສະບັບປັບປຸງ ເລກທີ **44 /**ສພຊ, ລົງວັນທີ **24 ທັນວາ** 2013;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 505 /ຖວທ, ລົງວັນທີ31 ພຶດສະພາ **2016.**

# ລັດຖະບານອອກດຳລັດ:

# ໝວດທີ 1

# ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການຕິດຕາມກວດກາການເຄື່ອນໄຫວວຽກງານວິຈິດສິນເພື່ອເຮັດໃຫ້ວຽກງານດັ່ງກ່າວດຳເນີນໄປຢ່າງຖືກຕ້ອງ, ສອດຄ່ອງກັບນະໂຍບາຍ, ກົດໝາຍ, ຮັບປະກັນສິດ ແລະ ພັນທະຂອງບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງໃນການດຳເນີນວຽກງານວິຈິດສິນ, ສ້າງຜົນງານໃຫ້ມີລັກສະນະຊາດ, ກ້າວໜ້າ ແລະ ມະຫາຊົນແນໃສ່ສົ່ງເສີມຫົວຄິດປະດິດສ້າງຂອງປະຊາຊົນໃນການພື້ນຟູ, ອະນຸລັກ, ພັດທະນາ ແລະ ຊົມໃຊ້ຜົນງານດ້ານວິຈິດສິນ, ຮັກສາເອກະລັກ, ມູນເຊື້ອທາງດ້ານວັດທະນະທຳຂອງຊາດໃຫ້ຍືນຍົງຕະຫຼອດໄປ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**ມາດຕາ 2. ວິຈິດສິນ**

ວິຈິດສິນ ແມ່ນສິ່ງທີ່ມະນຸດສ້າງຂຶ້ນຈາກຄຸນຄ່າອັນລວມຍອດຂອງອາລົມຈິດບວກກັບສີມືອັນປານີດເພື່ອຄວາມງົດງາມ, ຄວາມເພິ່ງພໍໃຈ ຊຶ່ງມີຄຸນຄ່າທາງດ້ານຈິດໃຈໂດຍບໍ່ສິ້ນສຸດ, ປະກອບດ້ວຍ ຈິດຕະກຳ, ປະຕິມາກຳ, ສະຖາປັດຕະຍະກຳສິນ, ພາບພິມ ແລະ ຫັດຖະກຳສິນ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ມີຄວາມໝາຍດັ່ງນີ້:

1. **ສິລະປິນສາຂາວິຈິດສິນ** ໝາຍເຖິງ ຜູ້ສ້າງສັນຜົນງານດ້ານວິຈິດສິນ ເປັນຕົ້ນ ນັກແຕ້ມ, ນັກຄວັດ, ນັກປັ້ນ, ນັກຫຼໍ່, ນັກຖ່າຍຮູບສິນ ແລະ ນັກອອກແບບສິນ;

2. **ຫໍພິພິທະພັນສິນ** ໝາຍເຖິງ ສະຖານທີ່ວາງສະແດງ, ສະສົມ, ອະນຸລັກ ແລະ ປົກປັກຮັກສາຜະລິດຕະພັນວິຈິດສິນ ເພື່ອການຄົ້ນຄວ້າ, ສຶກສາອົບຮົມ, ທັດສະນະສຶກສາ ແລະ ການທ່ອງທ່ຽວຂອງຄົນພາຍໃນ ແລະ ຕ່າງປະເທດ;

3. **ຫ້ອງວາງສະແດງ** ໝາຍເຖິງ ສະຖານທີ່ວາງສະແດງຜົນງານດ້ານວິຈິດສິນ ເພື່ອໂຄສະນາເຜີຍແຜ່ ແລະ ຈໍາໜ່າຍ;

4. **ງານວາງສະແດງຜົນງານວິຈິດສິນ** ໝາຍເຖິງ ການນໍາຜົນງານດ້ານວິຈິດສິນມາວາງສະແດງ ເພື່ອໂຄສະນາເຜີຍແຜ່ ແລະ ຈໍາໜ່າຍ;

5. **ອະນຸສາວະລີ** ໝາຍເຖິງ ຜົນງານປະຕິມະກໍາ ເພື່ອຈາລຶກເຖິງຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ ເປັນຕົ້ນ ຮູບປັ້ນຜູ້ນໍາ, ວິລະບູລຸດ, ວິລະຊົນ;

6. **ນັກອອກແບບ** ໝາຍເຖິງ ຜູ້ທີ່ໃຫ້ແນວຄິດລິເລີ່ມປະດິດສ້າງ ຮູບພາບສະເກັດ ຫຼື ຕົ້ນແບບຂອງຜົນງານດ້ານວິຈິດສິນ;

7. **ການອະນຸລັກຜົນງານດ້ານວິຈິດສິນ** ໝາຍເຖິງ ການປົກປັກຮັກສາໄວ້ຊຶ່ງຄຸນຄ່າທາງສິລະປະດ້ານວັດທະນະທໍາ, ປະຫວັດສາດ ເພື່ອບໍ່ໃຫ້ເຊື່ອມໂຊມ ແລະ ສູນຫາຍໄປຕາມການເວລາ;

8. **ການກ່າຍຜົນງານວິຈິດສິນ ຫຼື ການລອກແບບ** (Copy) ໝາຍເຖິງ ການສ້າງຂຶ້ນໃໝ່ໂດຍກ່າຍເອົາແບບເກົ່າ, ສີສັນ, ລວດລາຍ, ຮູບຮ່າງລັກສະນະວັດຖຸ ຫຼື ຮູບແບບດັ່ງເດີມ;

9. **ການຈຳລອງ** ໝາຍເຖິງ ການຮຽນແບບ ຫຼື ການຖອດແບບ, ການເຮັດຂຶ້ນໃໝ່ທີ່ມີຮູບຊົງ, ສັດສ່ວນ, ມິຕິ, ລວດລາຍ, ການຕົບແຕ່ງ ແລະ ຈຸດພິເສດອື່ນ ໃຫ້ຖືກຕ້ອງຕາມແບບດັ່ງເດີມ;

10. **ນັກວິຈິດສິນ** ໝາຍເຖິງ ນັກວິຈິດຕະກອນ, ນັກປະຕິມາກອນ, ນັກນິເທດສິນ;

11. **ນັກຈິດຕະກອນ** ໝາຍເຖິງ ນັກແຕ້ມທີ່ໄດ້ຜ່ານການຮຽນຮູ້, ຈົບຫຼັກສູດລະດັບໃດໜຶ່ງ ຫຼື ຜູ້ທີ່ມີປະສົບການ;

12. **ນັກປະຕິມາກອນ** ໝາຍເຖິງ ນັກປັ້ນ, ນັກຄັວດ, ນັກປັ້ນດິນເຜົາ, ນັກສິລະປະໂລຫະທີ່ໄດ້ຜ່ານການຮຽນຮູ້ ຈົບຫຼັກສູດລະດັບໃດໜຶ່ງ ຫຼື ຜູ້ທີ່ມີປະສົບການ;

13. **ນັກນິເທດສິນ** ໝາຍເຖິງ ນັກອອກແບບສື່ໂຄສະນາຕ່າງໆ ດ້ານງານສິນ;

14. **ຮູບຖ່າຍວິຈິດສິນ** ໝາຍເຖິງ ການຖ່າຍພາບທີ່ມີສິລະປະ, ເສັ້ນ, ແສງ, ເງົາ ແລະ ມີຊີວິດຊີວາ;

15. **ສິລະປະພາບພິມ** ໝາຍເຖິງ ຮູບພາບທີ່ໄດ້ຈາກແມ່ພິມແລ້ວພິມລົງໃສ່ວັດສະດຸໃຫ້ເກີດເປັນຮູບສິລະປະ;

16. **ຫັດຖະກຳສິນ** ໝາຍເຖິງ ການສ້າງຜະລິດຕະພັນຫັດຖະກຳ ທີ່ມີສິລະປະ, ກາຍເປັນຜະລິດຕະພັນຫັດຖະກຳ ທີ່ເປັນເອກະລັກເຊັ່ນ ເຄື່ອງຕົກແຕ່ງ, ເຄື່ອງໃຊ້ສອຍ, ເຄື່ອງນຸ່ງຫົ່ມ, ເຄື່ອງປະດັບ, ເຄື່ອງເອ້ ແລະ ອື່ນໆ;

17. **ສະຖາປັດຕະຍະກຳສິນ** ໝາຍເຖິງ ສະຖາປັດຕະຍະກຳທີ່ມີສິລະປະປະກອບເຂົ້າທາງດ້ານຮູບຊົງ, ການຕົກແຕ່ງພາຍໃນ-ພາຍນອກເຊັ່ນ ສາສະໜາສະຖານ, ອາຄານ ແລະ ເຮືອນພັກອາໄສ ແລະ ອື່ນໆ ທີ່ປະດັບປະດາດ້ວຍລວດລາຍສິລະປະ ທີ່ມີລັກສະນະຊາດ, ລັກສະນະທ້ອງຖິ່ນ ອັນ

ປານິດວິຈິດບັນຈິງ ເປັນຕົ້ນ ສິມ, ກຸຕິ, ຫາດ, ປະຕູໂຂງ, ຫໍແຈກ, ຫໍກອງ, ຫໍຫຼັກເມືອງ.

**ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບວຽກງານວິຈິດສິນ**

ລັດມີນະໂຍບາຍ ກ່ຽວກັບວຽກງານວິຈິດສິນ ດັ່ງນີ້:

1. ສົ່ງເສີມວຽກງານອະນຸລັກ, ພັດທະນາ ແລະ ເຜີຍແຜ່ກ່ຽວກັບເອກະລັກສິລະປະວິຈິດສິນຂອງຊາດ, ຂອງທ້ອງຖິ່ນ ແລະ ມະຫາຊົນ ທີ່ມີລັກສະນະຊາດ ແລະ ກ້າວໜ້າໃຫ້ຍືນຍົງ;

2. ສົ່ງເສີມການຄົ້ນຄວ້າ, ການປະດິດສ້າງ, ການເຜີຍແຜ່ຄຸນຄ່າ ທີ່ມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າຂອງງານວິຈິດສິນ ພ້ອມທັງຈຳກັດ, ແກ້ໄຂສິ່ງທີ່ກີດໜ່ວງຖ່ວງດຶງຄວາມກ້າວໜ້າຂອງປະຊາຊົນລາວບັນດາເຜົ່າ ແລະ ຂອງປະເທດຊາດ;

3. ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃຫ້ດຳເນີນການຄົ້ນຄວ້າວິໄຈ ກ່ຽວກັບວຽກງານວິຈິດສິນດ້ວຍນະໂຍບາຍຕ່າງໆ ຕາມລະບຽບ, ກົດໝາຍ;

4. ຊຸກຍູ້ ແລະ ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາກລັດ ແລະ ເອກະຊົນລົງທຶນສ້າງສະຖາບັນການສຶກສາ, ສ້າງວິຊາຊີບ, ຄົ້ນຄວ້າປະດິດສ້າງຜົນງານ, ພັດທະນາຜົນງານ ແລະ ຜະລິດຕະພັນດ້ານວິຈິດສິນໃຫ້ມີຄວາມອຸດົມຮັ່ງມີ, ຫຼາຍຮູບຫຼາຍສີ ແລະເປັນສິນຄ້າ;

5. ຮັບຮູ້ ກຳມະສິດ ກ່ຽວກັບຜົນງານດ້ານວິຈິດສິນ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຂຶ້ນທະບຽນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ປົກປ້ອງຜົນປະໂຫຍດອັນຊອບທຳ ນັບທັງຜູ້ປະກອບກິດຈະການ ແລະ ຜູ້ຊົມໃຊ້ຜົນງານທາງດ້ານວິຈິດສິນ.

**ມາດຕາ 5. ຫຼັກການເຄື່ອນໄຫວວຽກງານວິຈິດສິນ**

ການເຄື່ອນໄຫວວຽກງານວິຈິດສິນໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ຮັບປະກັນລັກສະນະຊາດ, ເຄົ້າເດີມ, ວິທະຍາສາດ, ກ້າວໜ້າ, ທັນສະໄໝ ແລະ ມະຫາຊົນ;

2. ການຄຸ້ມຄອງ, ການປົກປັກຮັກສາ, ການອະນຸລັກ-ຟື້ນຟູ, ການສົ່ງເສີມ ແລະ ການພັດທະນາວຽກງານວິຈິດສິນ ຕ້ອງໃຫ້ສອດຄ່ອງກັບ ແນວທາງ, ນະໂຍບາຍ, ກົດໝາຍ ແລະ ການມີສ່ວນຮ່ວມຂອງມະຫາຊົນ;

3. ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານວິຈິດສິນຕ້ອງຮັບປະກັນຄວາມຍຸຕິທຳ, ໂປ່ງໃສ, ສາມາດກວດສອບໄດ້.

**ມາດຕາ 6. ສິດ ແລະ ພັນທະຂອງພົນລະເມືອງລາວ**

ພົນລະເມືອງລາວ ມີເສລີພາບໃນການເຄື່ອນໄຫວ ແລະ ການຄົ້ນຄວ້າສ້າງສັນຜົນງານດ້ານວິຈິດສິນ ແລະ ປະກອບກິດຈະການ, ປະກອບຄ□າເຫັນ, ສະແດງທັດສະນະ, ຕຳນິວິຈານຕໍ່ຜົນງານ, ຜະລິດຕະພັນສິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃນທາງສ້າງສັນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ອາໄສຢູ່ ສປປລາວ ລ້ວນແຕ່ມີພັນທະໃນການປົກປັກຮັກສາ, ອະນຸລັກ, ວຽກງານວິຈິດສິນທີ່ມີຄຸນຄ່າຂອງຊາດລາວ.

ຄົນຕ່າງປະເທດ, ນັກທ່ອງທ່ຽວທີ່ເຂົ້າມາ ສປປລາວ ລວມທັງຄົນລາວຢູ່ຕ່າງປະເທດ ກໍມີພັນທະປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ອະນຸລັກຜົນງານດ້ານວິຈິດສິນຂອງຊາດ.

**ມາດຕາ 7. ການຮ່ວມມືສາກົນ**

ລັດສົ່ງເສີມການພົວພັນ, ຮ່ວມມືກັບສາກົນດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບວຽກງານວິຈິດສິນ ລວມທັງການສ້າງກິດຈະກຳຮ່ວມກັນ ແລະ ວາງສະແດງຮ່ວມກັນ, ຍາດແຍ່ງການຊ່ວຍເຫຼືອເພື່ອເຮັດໃຫ້ວຽກງານວິຈິດສິນມີຄຸນນະພາບ ແລະ ປະສິດທິພາບ.

**ມາດຕາ 8. ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານວິຈິດສິນຢູ່ ສປປລາວ ລວມທັງພົນລະເມືອງລາວ ແລະ ການຈັດຕັ້ງຂອງລາວ ທີ່ໄປວາງສະແດງ ແລະ ແຂ່ງຂັນຢູ່ຕ່າງປະເທດ.

## ໝວດທີ 2

## ປະເພດ ແລະ ລັກສະນະຂອງວິຈິດສິນ

**ມາດຕາ 9. ປະເພດວິຈິດສິນ**

ວິຈິດສິນ ປະກອບມີ4ປະເພດດັ່ງນີ້:

1. ຈິດຕະກຳ;
2. ປະຕິມາກຳ;
3. ສິລະປະພາບພິມ;
4. ການອອກແບບງານສິນ.

**ມາດຕາ 10. ຈິດຕະກຳ**

ຈິດຕະກຳ ແມ່ນການແຕ້ມດ້ວຍສໍດຳ, ສີນ້ຳ, ສີນ້ຳມັນ, ສີໂປສເຕີ,ສີອະຄຣີລິກ (ACRYLIC), ສໍຖ່ານຄາບອນ ແລະ ອື່ນໆ ລົງວັດສະດຸຕ່າງໆ

ເຊັ່ນ ເຈ້ຍ, ໄມ້ອັດ, ຜ້າແພ, ຝາ ຊຶ່ງຮູບແຕ້ມເຫຼົ່ານັ້ນ ມີຫຼາຍລັກສະນະ, ຫຼາຍຮູບແບບ ແລະ ເນື້ອໃນເປັນຕົ້ນ ຮູບເໝືອນຄົນ, ຮູບສັດ, ຮູບທຳມະຊາດ, ຮູບຊີວິດປະຈຳວັນ ແລະ ຮູບປະກອບເລື່ອງ ແລະ ອື່ນໆ.

**ມາດຕາ 11. ປະຕິມາກຳ**

ປະຕິມະກຳ ແມ່ນການປັ້ນ, ການແກະສະຫຼັກ, ການຫຼໍ່, ການຄວັດດ້ວຍດິນໜຽວ, ຂີ້ເຜີ້ງ, ສະບູ, ໄມ້, ຫີນ, ປູນປຣາສເຕີ, ໂລຫະ ແລະ ວັດສະດຸຕ່າງໆ ໃຫ້ອອກມາເປັນຜົນງານ ແລະ ຜະລິດຕະພັນສິນ.

**ມາດຕາ 12. ສິລະປະພາບພິມ**

ສິລະປະພາບພິມ ແມ່ນຮູບພາບທີ່ໄດ້ຈາກການສ້າງແມ່ພິມແລ້ວພິມດ້ວຍນ້ຳມຶກລົງໃສ່ເຈ້ຍ, ວັດສະດຸ ຫຼື ໂລຫະຕ່າງໆໃຫ້ເກີດເປັນຮູບສິລະປະ.

**ມາດຕາ 13. ການອອກແບບງານສິນ**

ການອອກແບບງານສິນ ແມ່ນການອອກແບບສື່ຕ່າງໆ ເຊັ່ນ ອອກແບບຜະລິດຕະພັນ, ອອກແບບສື່ສິ່ງພິມ, ອອກແບບສື່ໂຄສະນາ, ອອກແບບສື່ເອເລັກໂຕຼນິກ ແລະ ອື່ນໆ.

**ມາດຕາ 14. ລັກສະນະວິຈິດສິນ**

ວິຈິດສິນ ແບ່ງອອກເປັນ 3ລັກສະນະຄື :

1. ວິຈິດສິນພື້ນເມືອງ;
2. ວິຈິດສິນຮ່ວມສະໄໝ;
3. ວິຈິດສິນແບບສ້າງສັນ.

**ມາດຕາ 15. ວິຈິດສິນພື້ນເມືອງ**

ວິຈິດສິນພື້ນເມືອງ ແມ່ນຜົນງານທີ່ມີເອກະລັກ ທາງດ້ານວິຈິດສິນ, ສິລະປະ ວັດທະນະທຳ ແລະ ປະຫວັດສາດ ເປັນຕົ້ນແບບດັ່ງເດີມ ກ່ຽວກັບ

ນິທານພື້ນບ້ານ, ພຸດທະປະຫວັດ ແລະ ອື່ນໆ ດ້ວຍການແຕ້ມ ເຊັ່ນ ແຕ້ມລາຍລາວ, ແຕ້ມຝາຜະໜັງ; ດ້ວຍການຟອກ ເຊັ່ນ ຟອກເງິນ, ຟອກຄຳປີວ, ແລະ ອື່ນໆ; ດ້ວຍການປັ້ນ, ການຫຼໍ່, ການຄັວດແກະສະຫຼັກ, ການເຜົາ ແລະ ອື່ນໆ ເຊັ່ນ: ລວດລາຍລາວ, ພະພຸດທະຮູບ ເຮັດດ້ວຍດິນ, ປູນ, ພະທາຍເພັດ, ໄມ້, ທອງ, ສຳລິດ, ແລະ ອື່ນໆ, ວຽກງານຫັດຖະກຳ ເຊັ່ນ ລວດລາຍຜ້າທີ່ເປັນເອກະລັກແຕ່ລະທ້ອງຖິ່ນ, ການຕີເງິນ, ທອງ, ຄຳ ແລະ ອື່ນໆ.

**ມາດຕາ 16. ວິຈິດສິນຮ່ວມສະໄໝ**

ວິຈິດສິນຮ່ວມສະໄໝ ແມ່ນຜົນງານ ທີ່ມີເອກະລັກຂອງຊາດ, ລັກ ສະນະກ້າວໜ້າທີ່ສ້າງຂຶ້ນໃໝ່ ເຊັ່ນ ການປັ້ນ, ຫຼໍ່ອະນຸສາວະລີບັນພະບູລຸດ, ບຸກຄົນສຳຄັນທາງປະຫວັດສາດ; ການແຕ້ມ, ການພິມ, ແລະ ການຄວັດແກະສະຫຼັກ ດ້ວຍວັດສະດຸ, ໂລຫະຕ່າງໆ ທີ່ຮັບໃຊ້ສັງຄົມໃນປັດຈຸບັນ ຊຶ່ງມີການປະສົມປະສານກົມກຽວກັນລະຫວ່າງອັນໃໝ່ ແລະ ອັນເກົ່າ ເພື່ອໃຫ້ສອດຄ່ອງກັບວິວັດທະນາການຂອງສັງຄົມ ແລະ ພັດທະນາປະເທດຊາດ.

**ມາດຕາ 17. ວິຈິດສິນແບບສ້າງສັນ**

ວິຈິດສິນແບບສ້າງສັນ ແມ່ນການປະດິດສ້າງຜົນງານດ້ານວິຈິດສິນໃຫ້ມີຄວາມ ແປກໃໝ່ ໃນການແຕ້ມ, ການຄວັດ, ການປັ້ນ, ການຫຼໍ່ ແລະ ການພິມໃຫ້ທັນກັບຍຸກສະໄໝ ມີລັກສະນະກ້າວໜ້າ ແລະ ສາກົນຫຼາຍຂຶ້ນ.

## ໝວດທີ 3
## ການດຳເນີນທຸລະກິດກ່ຽວກັບວຽກງານວິຈິດສິນ

**ມາດຕາ 18. ການດຳເນີນທຸລະກິດກ່ຽວກັບວິຈິດສິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນແລະຕ່າງປະເທດຈະດຳເນີນທຸລະກິດດ້ານວິຈິດສິນ, ຫ້ອງວາງສະແດງ, ຫໍພິພິທະພັນສິນ, ສູນ

ຝຶກອົບຮົມ, ສະຖາບັນວິຈິດສິນ, ໂຮງຮຽນດ້ານວິຈິດສິນໄດ້ກໍຕໍ່ເມື່ອໄດ້ຮັບອະນຸຍາດທາງດ້ານວິຊາການຢ່າງຖືກຕ້ອງ ຈາກຂະແໜງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເທົ່ານັ້ນ.

ສ່ວນຂັ້ນຕອນການຂຶ້ນທະບຽນວິສະຫະກິດ ຫຼື ການອະນຸຍາດໃຫ້ ດຳເນີນທຸລະກິດ ທາງດ້ານວິຈິດສິນແຕ່ລະປະເພດ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສະຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນແລະກົດໝາຍອື່ນທີ່ກ່ຽວຂ້ອງ.

## ມາດຕາ 19. ເງື່ອນໄຂດຳເນີນກິດຈະການກ່ຽວກັບວຽກງານວິຈິດສິນ

ເງື່ອນໄຂດຳເນີນກິດຈະການກ່ຽວກັບວຽກງານວິຈິດສິນມີດັ່ງນີ້:

1. ມີຄຳຮ້ອງລະບຸ ຈຸດປະສົງ, ເປົ້າໝາຍຮັບໃຊ້ຂອງຕົນ ແລະ ບົດວິພາກເສດຖະກິດ;
2. ຕ້ອງມີສະຖານທີ່, ອຸປະກອນເຕັກນິກ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຂອງຕົນ;
3. ມີບຸກຄະລາກອນທີ່ມີຄຸນສົມບັດ, ຄວາມຮູ້ຄວາມສາມາດ, ປະສົບການດ້ານວຽກງານວິຈິດສິນ;
4. ໄດ້ຮັບການອະນຸຍາດທາງດ້ານວິຊາການ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

## ມາດຕາ 20. ການຄົ້ນຄວ້າວິໄຈ

ການຄົ້ນຄວ້າວິໄຈ ກ່ຽວກັບງານສິນນັ້ນ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຈຸດປະສົງ ຮ່ວມມືກັບຕ່າງປະເທດ ໃນການຄົ້ນຄວ້າວິໄຈ ກ່ຽວກັບຜົນງານວິຈິດສິນນັ້ນ ຕ້ອງໄດ້ຂໍອະນຸຍາດເປັນລາຍລັກອັກສອນ ຈາກຂະແໜງການຖະແຫຼງຂ່າວ, ວັດທະ

ນະທຳ ແລະ ທ່ອງທ່ຽວ. ຂໍ້ມູນ ແລະ ຜົນຂອງການຄົ້ນຄວ້າວິໄຈນັ້ນ ຕ້ອງມອບຕົ້ນສະບັບໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອເກັບຮັກສາໄວ້ ແລະ ໂຄສະນາເຜີຍແຜ່ຕາມລະບຽບການ.

**ມາດຕາ 21. ການສົ່ງອອກນອກປະເທດເພື່ອວິໄຈ**

ການສົ່ງຊິ້ນສ່ວນ ຫຼື ວັດຖຸທີ່ເປັນຜົນງານດ້ານວິຈິດສິນ ຊຶ່ງມີຄຸນຄ່າສູງອອກນອກປະເທດ ເພື່ອການວິໄຈຕ້ອງໄດ້ຂໍອະນຸຍາດຈາກລັດຖະບານໂດຍຜ່ານການສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 22. ການສົ່ງອອກ-ການນຳເຂົ້າ, ໂຄສະນາເຜີຍແຜ່ ຫຼື ຈຳໜ່າຍ**

ການສົ່ງອອກ-ການນຳເຂົ້າ, ໂຄສະນາເຜີຍແຜ່ ຫຼື ຈຳໜ່າຍຜົນງານ ແລະ ຜະລິດຕະພັນສິນຂອງຕ່າງປະເທດ ຕ້ອງໄດ້ຜ່ານການກວດກາ ແລະ ໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ຜົນງານ ແລະ ຜະລິດຕະພັນສິນຂອງຕ່າງປະເທດ ໂດຍສະເພາະພຣະພຸດທະຮູບ ຫຼື ເປັນວັດຖຸທີ່ບໍ່ສອດຄ່ອງກັບວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດລາວ ແມ່ນບໍ່ອະນຸຍາດໃຫ້ນຳເຂົ້າ, ໂຄສະນາ, ເຜີຍແຜ່ ຫຼື ຈຳໜ່າຍແຕ່ຢ່າງໃດ.

**ມາດຕາ 23. ການຊື້, ຂາຍ, ໂອນ ແລະ ການສືບທອດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຈຸດປະສົງ ຊື້, ຂາຍ, ໂອນແລະສືບທອດຜົນງານ ແລະ ຜະລິດຕະພັນສິນຕ້ອງໄດ້ຂໍອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພ້ອມທັງໃຫ້ຈົດທະບຽນໃນການດຳເນີນທຸລະກິດຕາມລະບຽບ, ກົດໝາຍ.

## ໝວດທີ 4

## ການແຂ່ງຂັນສ້າງຜົນງານດ້ານວິຈິດສິນແລະການວາງສະແດງ

### ມາດຕາ 24. ເປົ້າໝາຍການແຂ່ງຂັນ ສ້າງຜົນງານດ້ານວິຈິດສິນ

ເປົ້າໝາຍໃນການຈັດຕັ້ງແຂ່ງຂັນສ້າງຜົນງານດ້ານວິຈິດສິນມີດັ່ງນີ້:

1. ເພື່ອຮັບປະກັນສິດ, ພັນທະ ແລະ ຜົນງານຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການດຳເນີນວຽກງານວິຈິດສິນໃຫ້ມີລັກສະນະຊາດ, ກ້າວໜ້າ ແລະ ມະຫາຊົນ;
2. ເພື່ອອະນຸລັກຮັກສາເອກະລັກ, ມູນເຊື້ອ ທາງດ້ານວັດທະນະທຳ ຂອງຊາດໃຫ້ຍືນຍົງ;
3. ເພື່ອສົ່ງເສີມຫົວຄິດປະດິດສ້າງຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃນການພື້ນຟູ, ອະນຸລັກ, ພັດທະນາ ແລະ ຊົມໃຊ້ຜົນງານດ້ານວິຈິດສິນໃຫ້ທຽມທັນກັບພາກພື້ນ ແລະ ສາກົນ.

### ມາດຕາ 25. ການແຂ່ງຂັນສ້າງຜົນງານດ້ານວິຈິດສິນ

ການແຂ່ງຂັນສ້າງຜົນງານ ດ້ານວິຈິດສິນ ແມ່ນການສົ່ງເສີມຫົວຄິດປະດິດສ້າງ, ພອນສະຫວັນ ເພື່ອພັດທະນາວຽກງານວິຈິດສິນໃຫ້ອຸດົມຮັ່ງມີ, ຫຼາຍສີສັນ ແລະ ຍືນຍົງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຈັດຕັ້ງແຂ່ງຂັນຜົນງານດ້ານວິຈິດສິນຕ້ອງປະຕິບັດໃຫ້ສອດຄ່ອງກັບ ມາດຕາ 24 ແລະ ມາດຕາ 25 ຂອງດຳລັດສະບັບນີ້.

ສຳລັບວິທີການໃນການຈັດຕັ້ງແຂ່ງຂັນສ້າງຜົນງານດ້ານວິຈິດສິນໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 26. ການວາງສະແດງ**

ການວາງສະແດງຜົນງານ ແລະ ຜະລິດຕະພັນສິນ ມີ 3ປະເພດຕົ້ນຕໍ ດັ່ງນີ້ :

1. ການວາງສະແດງ ເພື່ອເຜີຍແຜ່ໃຫ້ມວນຊົນເຂົ້າຊົມ;

2. ການວາງສະແດງເພື່ອໃຫ້ມີການປະກອບສ່ວນເຂົ້າໃນການປົກປັກຮັກສາ, ອະນຸລັກ, ສຶກສາ, ຄົ້ນຄວ້າວິໄຈ ແລະ ບູລະນະປະຕິສັງຂອນ;

3. ການວາງສະແດງເພື່ອການຄ້າ

ການວາງສະແດງຜົນງານ ແລະ ຜະລິດຕະພັນສິນທີ່ດຳເນີນຢູ່ພາຍໃນ ຫຼື ຕ່າງປະເທດ ຕ້ອງໄດ້ຂໍອະນຸຍາດ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວພາຍຫຼັງປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໄດ້ຕົກລົງເປັນເອກະພາບກັນແລ້ວ.

ສຳລັບການວາງສະແດງຜົນງານ ແລະ ຜະລິດຕະພັນສິນ ຢູ່ຕ່າງປະເທດນັ້ນຕ້ອງໄດ້ຂໍອະນຸຍາດນຳລັດຖະບານ ໂດຍຜ່ານການເຫັນດີ ຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 27. ສະຖານທີ່ວາງສະແດງ**

ພື້ນທີ່ຈັດວາງງານສະແດງ ຕ້ອງມີພື້ນທີ່ກວ້າງເໝາະສົມ, ມີອຸປະກອນອຳນວຍຄວາມສະດວກພຽງພໍ ແລະ ເໝາະສົມຕາມຂະໜາດຂອງຫ້ອງວາງສະແດງ, ຮັບປະກັນຄວາມປອດໄພແກ່ສັງຄົມ, ມີຄວາມສະດວກສະບາຍ, ເປັນມິດຕໍ່ສິ່ງແວດລ້ອມ ແລະ ຫ້ອງວາງສະແດງຕ້ອງຮັບປະກັນທາງດ້ານອັກຄີໄພ.

**ມາດຕາ 28. ສິດໃນການອະນຸຍາດໃຫ້ວາງສະແດງ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ອະນຸຍາດໃຫ້ຈັດງານວາງສະແດງລະດັບຊາດ ແລະ ງານວາງສະແດງຂອງສາກົນ ທີ່ມາຈັດວາງສະແດງຢູ່ ສປປລາວ ສ່ວນພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງເປັນຜູ້ອະນຸຍາດໃຫ້ຈັດງານວາງສະແດງລະດັບແຂວງ, ນະຄອນຫຼວງ.

## ໝວດທີ 5

## ປະເພດນັກສິລະປິນວິຈິດສິນ

**ມາດຕາ 29. ປະເພດນັກສິລະປິນວິຈິດສິນ**

ນັກສິລະປິນວິຈິດສິນ ມີ 3ປະເພດດັ່ງນີ້ :

1. ນັກຈິດຕະກອນ;
2. ນັກປະຕິມາກອນ;
3. ນັກຖ່າຍພາບສິນ.

ນັກຈິດຕະກອນ, ນັກປະຕິມາກອນ, ນັກຖ່າຍພາບສິນລວມທັງ ນັກສິນລະປິນວິຈິດສິນອາຊີບ, ເຄິ່ງອາຊີບ ແລະ ສະໝັກຫຼິ້ນ.

**ມາດຕາ 30. ນັກວິຈິດຕະກອນ**

ນັກວິຈິດຕະກອນແມ່ນນັກແຕ້ມທີ່ແຕ້ມດ້ວຍສໍດຳ, ສີນ້ຳ, ສີນ້ຳມັນ, ສີໂປສເຕີ, ສີອະຄຣີລິກ(ACRYLIC), ສໍຖ່ານຄາບອນ ແລະ ອື່ນໆ ລົງວັດສະດຸເຊັ່ນ: ເຈ້ຍ, ໄມ້ອັດ, ຜ້າແພ, ຝາຊຶ່ງຮູບແຕ້ມເຫຼົ່ານັ້ນ ມີຫຼາຍລັກສະນະຫຼາຍຮູບແບບ ແລະ ເນື້ອໃນ ເປັນຕົ້ນຮູບເໝືອນ, ຮູບສັດ, ຮູບທຳມະຊາດ, ຮູບຊີວິດປະຈຳວັນ ແລະ ຮູບປະກອບເລື່ອງ ແລະ ອື່ນໆ.

**ມາດຕາ 31. ນັກປະຕິມາກອນ**

ນັກປະຕິມາກອນ ແມ່ນນັກປັ້ນ, ແກະສະຫຼັກ, ຫຼໍ່, ຄົວດດ້ວຍວັດສະດຸ ດິນໜຽວ, ຂີ້ເຜີ້ງ, ໄມ້, ຫີນ, ຫີນອ່ອນ, ປູນປຣາສເຕີ, ໂລຫະ ແລະ ວັດສະດຸອື່ນ ໃຫ້ອອກມາເປັນຜົນງານວິຈິດສິນ.

**ມາດຕາ 32. ນັກຖ່າຍພາບສິນ**

ນັກຖ່າຍພາບສິນ ແມ່ນນັກຖ່າຍພາບ ໃຫ້ເກີດເປັນຮູບສິລະປະ, ຫຼາກຫຼາຍສີສັນ ມີທັງອາຊີບ, ເຄິ່ງອາຊີບ ແລະ ສະໝັກຫຼິ້ນ.

**ມາດຕາ 33. ສິດ, ພັນທະ ແລະ ໜ້າທີ່ຂອງນັກສິນລະປິນວິຈິດສິນ**

ນັກສິລະປິນວິຈິດສິນທຸກປະເພດມີສິດ, ພັນທະ ແລະ ໜ້າທີ່ດັ່ງນີ້:

1. ສະເໜີພາບ ຕໍ່ໜ້າກົດໝາຍ, ຄົ້ນຄວ້າ, ສຶກສາຮໍ່າຮຽນ ເພື່ອຍົກສູງລະດັບທາງການເມືອງ, ວິຊາສະເພາະ ແລະ ວັດທະນະທຳ;
2. ຄົ້ນຄວ້າປະດິດສ້າງ ແລະ ວາງສະແດງຜົນງານຂອງຕົນ ທີ່ໄດ້ຜ່ານການກວດກາ ແລະ ອະນຸຍາດ ຢ່າງຖືກຕ້ອງຕາມຫຼັກການຕໍ່ສາທາລະນະຊົນ ດ້ວຍການວາງສະແດງເຜີຍແຜ່ ຜ່ານສື່ມວນຊົນທັງພາຍໃນ ແລະ ຕ່າງປະເທດ;
3. ເຄື່ອນໄຫວ, ດຳເນີນທຸລະກິດທາງດ້ານວິຈິດສິນຢ່າງຖືກຕ້ອງ;
4. ອະນຸລັກ, ປົກປັກຮັກສາ, ເສີມຂະຫຍາຍ ມູນເຊື້ອສິລະປະວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;
5. ຖ່າຍທອດຄວາມຮູ້, ຄວາມສາມາດ, ບົດຮຽນ ແລະ ປະສົບການ ເພື່ອບຳລຸງ, ສ້າງສິນລະປິນຮຸ່ນສືບທອດ ແລະ ສະໝັກໃຈມອບຜົນງານຜະລິດຕະພັນດ້ານວິຈິດສິນຂອງຕົນ ເພື່ອເປັນມໍຣະດົກໃຫ້ແກ່ ອົງການກ່ຽວຂ້ອງຂອງລັດໃນການຄົ້ນຄວ້າສຶກສາຮໍ່າຮຽນ;

6. ເສຍພາສີ, ອາກອນ ແລະ ປະຕິບັດພັນທະອື່ນຕາມລະບຽບ,ກົດໝາຍ;
7. ຊື່ສັດຕໍ່ເນື້ອໃນຂອງຕົວແບບທີ່ຕົນນໍາມາສ້າງສັນເປັນຜົນງານ, ຮັກມັກ ແລະ ນັບຖືວິຊາຊີບຂອງຕົນ;
8. ໃຫ້ກຽດ, ປະຕິບັດ ແລະ ນັບຖືການຈັດຕັ້ງ ທີ່ຕົນຂຶ້ນກັບຢ່າງເຂັ້ມງວດ ພ້ອມທັງ ມີມາລະຍາດ, ຮູ້ຮັກສາກຽດສັກສີຂອງຕົນ, ໃຫ້ກຽດແກ່ເພື່ອນຮ່ວມງານ ແລະ ຜູ້ຊົມໃຊ້ຜະລິດຕະພັນດ້ານວິຈິດສິນ.

## ໝວດທີ 6

## ຄ່າທໍານຽມ ແລະ ຄ່າບໍລິການ

### ມາດຕາ 34. ຄ່າທໍານຽມ ແລະ ຄ່າບໍລິການ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ດໍາເນີນກິດຈະການກ່ຽວກັບຜະລິດຕະພັນສິນ ຕ້ອງເສຍຄ່າທໍານຽມ ແລະ ຄ່າບໍລິການຕາມລັດຖະບັນຍັດຂອງປະທານປະເທດ ທີ່ກໍານົດອອກໃນແຕ່ລະໄລຍະ.

ຄ່າທໍານຽມ, ຄ່າບໍລິການ ຕ້ອງມອບເຂົ້າງົບປະມານແຫ່ງລັດ ຢ່າງຄົບຖ້ວນ, ການຄຸ້ມຄອງລາຍຮັບ ແລະ ລາຍຈ່າຍຕ້ອງປະຕິບັດຕາມກົດໝາຍວ່າດ້ວຍງົບປະມານ.

## ໝວດທີ 7

## ຂໍ້ຫ້າມ

### ມາດຕາ 35. ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີພຶດຕິກໍາດັ່ງນີ້:

1. ນໍາເອົາຜົນງານດ້ານວິຈິດສິນ ເປັນເຄື່ອງມືໃນການເຄື່ອນໄຫວ, ໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີ, ຍຸແຍ່, ແບ່ງແຍກ ຄວາມສາມັກຄີປອງດອງລະຫວ່າງບັນດາເຜົ່າ, ສາສະໜາ, ແນວທາງນະໂຍບາຍຂອງພັກ, ກົດໝາຍ

ຂອງລັດ ແລະ ມ້າງເພ, ທຳລາຍມູນເຊື້ອສິລະປະວັດທະນະທຳອັນດີງາມຂອງຊາດ, ຂອງເຜົ່າ;

2. ນຳເອົາສິລະປະດ້ານວິຈິດສິນທີ່ເປັນພິດໄພ, ເຊື່ອມຊາມ, ຂອດກະຈາລາມົກອານາຈານ ແລະ ສິ່ງອື່ນມາຈັດຕັ້ງເຜີຍແຜ່ໃນ ສປປລາວ, ຍຸຍົງສົ່ງເສີມເບື່ອເມົາກໍ່ໃຫ້ເກີດຄວາມຮຸນແຮງ, ອາຊະຍາກຳ, ສິ່ງເສບຕິດ, ການພະນັນ ແລະ ການເຊື່ອຖືງົມງວາຍ;

3. ລັກໂລບ, ສໍ້ໂກງເອົາຜົນງານຂອງຄົນອື່ນໄປເປັນສິດທິບັດຂອງຕົນເອງ ຮຽນແບບ ຫຼື ດັດແປງຜົນງານດ້ານວິຈິດສິນທຸກປະເພດທີ່ບໍ່ໄດ້ຮັບການເຫັນດີຈາກເຈົ້າຂອງສິດທິບັດ ແລະ ການອະນຸຍາດຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ;

4. ນຳເອົາຜົນງານດ້ານວິຈິດສິນທຸກປະເພດທີ່ບໍ່ທັນໄດ້ຮັບການກວດການຳອອກໄປເຄື່ອນໄຫວ, ວາງສະແດງ ຫຼື ເຜີຍແຜ່ຜ່ານສື່ມວນຊົນຢູ່ພາຍໃນ ແລະ ຕ່າງປະເທດ;

5. ເຄື່ອນໄຫວວາງສະແດງຕາມສະຖານທີ່ຕ້ອງຫ້າມ;

6. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບ, ກົດໝາຍ.

**ມາດຕາ 36. ຂໍ້ຫ້າມສຳລັບພະນັກງານຂອງລັດ**

ຫ້າມພະນັກງານຂອງລັດມີພຶດຕິກຳ ດັ່ງນີ້:

1. ສົມຮູ້ຮ່ວມຄິດກັບນັກສິລະປິນ ຫຼື ຜູ້ປະກອບທຸລະກິດວິຈິດສິນ ປອມແປງເອກະສານລາຍເຊັນ ແລະ ການກະທຳອື່ນ ເພື່ອຜົນປະໂຫຍດທີ່ບໍ່ຊອບທຳ;

2. ກົດໜ່ວງຖ່ວງດຶງເອກະສານ, ຫຼອກລວງ, ສໍ້ໂກງ, ນາບຂູ່, ຮີດໄຖນັກສິລະປິນວິຈິດສິນ ແລະ ຜູ້ປະກອບທຸລະກິດເພື່ອຫາຜົນປະໂຫຍດມາໃຫ້ຕົນເອງ, ຄອບຄົວ ແລະ ພັກພວກ;

3. ນຳໃຊ້, ດັດແປງ, ປັບປຸງເນື້ອໃນ, ຜະລິດຕະພັນ, ການເຄື່ອນໄຫວຕ່າງໆຂອງສິລະປິນວິຈິດສິນ ແລະ ຜູ້ປະກອບທຸລະກິດໂດຍລຳພັງ;

4. ແກ້ໄຂວຽກງານທີ່ມີລັກສະນະ ເລືອກປະຕິບັດ, ເຫັນແກ່ຄອບຄົວ, ພີ່ນ້ອງ ແລະ ພັກພວກ, ເຂົ້າຂ້າງ-ອອກຂາ, ລຳອຽງ, ບໍ່ທ່ຽງທຳ;

5. ນຳໃຊ້, ກ່າຍ ຫຼື ລັກໂລບເອົາຜົນງານຂອງຜູ້ອື່ນ;

6. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບ, ກົດໝາຍ.

## ໝວດທີ 8
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 37. ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານວິຈິດສິນສາມາດດຳເນີນດ້ວຍຮູບການໃດໜຶ່ງດັ່ງນີ້:

1. ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການແກ້ໄຂໂດຍສານປະຊາຊົນ;
5. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ.

### ມາດຕາ 38. ການປະນີປະນອມ

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບການເຄື່ອນໄຫວວຽກງານວິຈິດສິນຄູ່ກໍລະນີຈະຕ້ອງປຶກສາຫາລື ເພື່ອຫາທາງອອກຮ່ວມກັນຢ່າງສັນຕິວິທີ ດ້ວຍການປານີປານອມ ເພື່ອຄວາມເຂົ້າໃຈຊຶ່ງກັນ ແລະ ກັນ.

**ມາດຕາ 39. ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບການເຄື່ອນໄຫວວຽກງານວິຈິດສິນຄູ່ກໍລະນີສາມາດສະເໜີຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວບ່ອນທີ່ຕົນໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວວຽກງານວິຈິດສິນ ຫຼື ປະກອບກິດຈະການດໍາເນີນທຸລະກິດນັ້ນພິຈາລະນາແກ້ໄຂ.

**ມາດຕາ 40. ການແກ້ໄຂໂດຍຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບ ການເຄື່ອນໄຫວວຽກງານວິຈິດສິນຄູ່ກໍລະນີສາມາດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເພື່ອພິຈາລະນາແກ້ໄຂ.

**ມາດຕາ 41. ການແກ້ໄຂໂດຍສານປະຊາຊົນ**

ເມື່ອມີຂໍ້ຂັດແຍ່ງກ່ຽວກັບ ການເຄື່ອນໄຫວວຽກງານວິຈິດສິນຄູ່ກໍລະນີຝ່າຍໃດໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນຕາມຂະບວນການຍຸຕິທໍາ.

**ມາດຕາ 42. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບ ວຽກງານວິຈິດສິນ ທີ່ມີລັກສະນະສາກົນໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ.

## ໝວດທີ 9
## ການຄຸ້ມຄອງວຽກງານວິຈິດສິນ

**ມາດຕາ 43. ຄວາມຮັບຜິດຊອບຂອງ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະທ່ອງທ່ຽວ**

ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຮັບຜິດຊອບໃນການຄຸ້ມຄອງວຽກງານວິຈິດສິນດັ່ງນີ້:

1. ຄົ້ນຄວ້າ, ສ້າງແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານວິຈິດສິນ;

2. ຜັນຂະຫຍາຍແນວທາງນະໂຍບາຍ, ກົດໝາຍເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ;

3. ຂຶ້ນແຜນກໍານົດບໍາລຸງ ແລະ ສ້າງພະນັກງານ, ລັດຖະກອນ ທີ່ເຮັດວຽກວິຈິດສິນທຸກຂະແໜງ ເພື່ອຍົກສູງຄວາມຮູ້, ຄວາມສາມາດທາງດ້ານການເມືອງ, ວັດທະນະທໍາ ແລະ ວິຊາສະເພາະໃນຂອບເຂດທົ່ວປະເທດ;

4. ຄົ້ນຄວ້າເຜີຍແຜ່, ແນະນໍາ ແລະ ກວດກາ ການນໍາໃຊ້ເຕັກນິກວິທະຍາສາດ, ເຄື່ອງມື, ອຸປະກອນໃຫ້ພະນັກງານວິຈິດສິນໃນຂອບເຂດທົ່ວປະເທດ;

5. ຄົ້ນຄວ້າ, ກວດກາຜົນງານ ແລະ ຜະລິດຕະພັນດ້ານວິຈິດສິນຂັ້ນສູນກາງ;

6. ຄົ້ນຄວ້າ, ວາງແຜນ, ຊີ້ນໍານໍາພາ ໃນການປະດິດສ້າງຂອງໜ່ວຍງານວິຈິດສິນອາຊີບ, ການວາງສະແດງລະດັບຊາດ ເຊັ່ນ ວັນບຸນປະຫວັດສາດຂອງພັກ, ຂອງຊາດ, ຂອງພາກພື້ນ ແລະ ສາກົນ;

7. ຊ່ວຍທ້ອງຖິ່ນ ແລະ ໜ່ວຍງານວິຈິດສິນອື່ນໃນການຕິດຕາມ, ກວດກາ ສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ;

8. ກວດກາການປະຕິບັດນະໂຍບາຍ ແລະ ມາດຕະການຕໍ່ສິລະປິນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານວິຈິດສິນ;

9. ກວດກາການຈັດຕັ້ງ ປະຕິບັດລະບຽບ, ກົດໝາຍກ່ຽວກັບການເຄື່ອນໄຫວວຽກງານວິຈິດສິນຂອງສິລະປິນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

10. ອະນຸຍາດ, ສັ່ງໂຈະ, ຖອນໃບອະນຸຍາດກ່ຽວກັບການດຳເນີນທຸລະກິດວິຈິດສິນ;

11. ພົວພັນຮ່ວມມືກັບບັນດາປະເທດໃນພາກພື້ນ ແລະ ສາກົນກ່ຽວກັບວຽກງານວິຈິດສິນ;

12. ສະຫຼຸບ,ລາຍງານການເຄື່ອນໄຫວວຽກງານກ່ຽວກັບວິຈິດສິນໃນແຕ່ລະໄລຍະໃຫ້ລັດຖະບານ ຢ່າງເປັນປົກກະຕິ.

13. ປະຕິບັດ ແລະ ໜ້າທີ່ອື່ນຕາມກົດໝາຍ ແລະ ລະບຽບການ

**ມາດຕາ 44. ຄວາມຮັບຜິດຊອບຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວແຂວງ, ນະຄອນຫຼວງ**

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ແລະ ນະຄອນຫຼວງ ຮັບຜິດຊອບໃນການຄຸ້ມຄອງວຽກງານວິຈິດສິນ ໃນຂອບເຂດແຂວງ, ນະຄອນຫຼວງຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການຟື້ນຟູ, ອະນຸລັກ, ປົກປັກຮັກສາພັດທະນາ ແລະ ເຜີຍແຜ່ວຽກງານວິຈິດສິນ;

2. ຂຶ້ນແຜນກຳນົດບຳລຸງ ແລະ ສັບຊ້ອນພະນັກງານໃຫ້ສອດຄ່ອງເໝາະສົມກັບຄວາມ ຕ້ອງການຂອງວຽກງານວິຈິດສິນ;

3. ຄົ້ນຄວ້າ, ເຜີຍແຜ່, ແນະນຳ ແລະ ກວດກາການປະກອບເຄື່ອງມືໃຫ້ແກ່ຫ້ອງການວິຈິດສິນ;

4. ກວດຜ່ານອະນຸສາວະລີ, ຮູບແຕ້ມລະດັບຊາດ, ຜົນງານ ແລະ ຜະລິດຕະພັນດ້ານວິຈິດສິນ;

5. ແນະນຳ, ແຈ້ງໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງວຽກງານວິຈິດສິນທີ່ຂຶ້ນກັບຕົນ ປັບປຸງ, ປ່ຽນແປງ ຫຼື ຢຸດເຊົາການເຄື່ອນໄຫວວຽກງານ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະລະບຽບການ;

6. ຄົ້ນຄວ້າ, ວາງແຜນ, ຊີ້ນຳ ນຳພາການສ້າງສັນຜົນງານ, ການວາງສະແດງ ແລະ ການແຂ່ງຂັນ ເພື່ອຮັບໃຊ້ວັນສຳຄັນຕ່າງໆ;

7. ຊີ້ນຳຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ ແລະ ໜ່ວຍງານອື່ນ ໃນການຕິດຕາມກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ລາຍງານການເຄື່ອນໄຫວວຽກງານວິຈິດສິນໃນແຕ່ລະໄລຍະໃຫ້ຂັ້ນເທິງຂອງຕົນ;

8. ກວດກາການປະຕິບັດນະໂຍບາຍ ແລະ ມາດຕະການ ຕໍ່ສິລະປິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານວິຈິດສິນ;

9. ກວດກາການຈັດຕັ້ງ ປະຕິບັດລະບຽບ, ກົດໝາຍກ່ຽວກັບການເຄື່ອນໄຫວວຽກງານວິຈິດສິນ ຂອງສິລະປິນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

10. ພົວພັນ ແລະ ຮ່ວມມືທາງດ້ານວິຈິດສິນກັບບັນດາປະເທດເພື່ອນບ້ານໃກ້ຄຽງຕາມກົດໝາຍຂອງສປປລາວ;

11. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານວິຈິດສິນ ໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ອົງການປົກຄອງແຂວງ, ນະຄອນຫຼວງຢ່າງເປັນປົກກະຕິ.

12. ປະຕິບັດ ແລະ ໜ້າທີ່ອື່ນຕາມກົດໝາຍ ແລະ ລະບຽບການ

**ມາດຕາ 45. ຄວາມຮັບຜິດຊອບຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວເມືອງ, ເທດສະບານແລະນະຄອນ**

ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ ແລະ ນະຄອນຮັບຜິດຊອບໃນການຄຸ້ມຄອງວຽກງານວິຈິດສິນ ໃນຂອບເຂດເມືອງ, ເທດສະບານ ແລະ ນະຄອນຂອງຕົນດັ່ງນີ້:

1. ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການຟື້ນຟູ ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະເຜີຍແຜ່ວຽກງານວິຈິດສິນ;
2. ອອກລະບຽບການກ່ຽວກັບວຽກງານວິຈິດສິນ;
3. ຄົ້ນຄວ້າ, ເຜີຍແຜ່, ແນະນຳ ແລະ ກວດກາ ການປະກອບເຄື່ອງມື, ອຸປະກອນໃຫ້ໜ່ວຍງານວິຈິດສິນ;
4. ອອກຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ໃຫ້ສິລະປິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ວຽກງານວິຈິດສິນປັບປຸງ, ປ່ຽນແປງ ຫຼື ຢຸດເຊົາ ການເຄື່ອນໄຫວວຽກງານທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
5. ຄົ້ນຄວ້າ, ວາງແຜນ, ຊີ້ນຳນຳພາການສ້າງສັນ, ການວາງສະແດງ ແລະ ການແຂ່ງຂັນ ເພື່ອຮັບໃຊ້ງານສຳຄັນຕ່າງໆ;
6. ກວດກາການປະຕິບັດນະໂຍບາຍ ແລະ ມາດຕະການຕໍ່ສິລະປິນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກ ງານວິຈິດສິນ;
7. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານວິຈິດສິນ ໃນແຕ່ລະໄລຍະ ໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງນະຄອນ ຫຼວງ ແລະ ອົງການປົກຄອງເມືອງ, ເທດສະບານ ແລະ ນະຄອນຫຼວງ ຢ່າງ ເປັນປົກກະຕິ;

### ມາດຕາ 46. ສະມາຄົມວິຈິດສິນລາວ

ສະມາຄົມວິຈິດສິນລາວ ແມ່ນການຈັດຕັ້ງສັງຄົມວິຊາຊີບ, ເຄື່ອນໄຫວ ວຽກງານວິຈິດສິນ ທີ່ມີສິລະປິນສາຂາວິຈິດສິນ ເຊັ່ນ ນັກວິຈິດຕະກອນນັກ ປະຕິມາກອນ, ນັກນິເທດສິນ, ນັກຖ່າຍຮູບສິນ ຊຶ່ງໄດ້ຮັບອະນຸຍາດ ສ້າງຕັ້ງ ໂດຍອົງການລັດທີ່ກ່ຽວຂ້ອງ, ມີພາລະບົດບາດ ເປັນໃຈກາງໃນການຕິດຕໍ່, ພົວພັນ, ປະສານປະສົມທົບວຽກງານສິນ, ສຶກສາອົບຮົມ, ເຕົ້າໂຮມ ຄວາມ ສາມັກຄີ ແລະ ມີໜ້າທີ່ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງ ສະມາຊິກ ຂອງຕົນ ທັງເຂົ້າຮ່ວມໃນການປະຕິບັດແນວທາງ, ນະໂຍບາຍ, ລະບຽບ, ກົດໝາຍ ກ່ຽວກັບວຽກງານວິຈິດສິນ, ຕາມສິດ ແລະ ໜ້າທີ່ຂອງ ສະມາຄົມທີ່ໄດ້ກຳນົດໄວ້ໃນກົດລະບຽບ ຂອງສະມາຄົມວິຈິດສິນລາວ.

## ໝວດທີ 10

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 47. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການ ປະກອບສ່ວນເຂົ້າໃນວຽກງານວິຈິດສິນ ຈະໄດ້ຮັບການຍ້ອງຍໍເຊັ່ນ ຫຼຽນໄຊ ຫຼຽນກາ, ໃບຍ້ອງຍໍ, ນາມມະຍົດສິລະປິນ ແລະ ນະໂຍບາຍອື່ນ ຕາມລະ ບຽບການ.

### ມາດຕາ 48. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ແລະ ລະບຽບ,ກົດໝາຍອື່ນທີ່ກ່ຽວຂ້ອງຈະຖືກສຶກສາອົບຮົມກ່າວເຕືອນ, ປັບໃໝ, ໂຈະການເຄື່ອນໄຫວຊົ່ວຄາວ, ຖອນໃບອະນຸຍາດດຳເນີນກິດຈະການ ວຽກ ງານວິຈິດສິນ, ຖອນບັດນັກວິຊາການເຄື່ອນໄຫວວຽກງານວິຈິດສິນ ແລະໃຊ້

ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 11

## ວັນວິຈິດສິນແຫ່ງຊາດ, ເຄື່ອງໝາຍແລະຕາປະທັບ

### ມາດຕາ 49. ວັນວິຈິດສິນແຫ່ງຊາດ

ລັດຖະບານກຳນົດເອົາ ວັນທີ 11 ພະຈິກ ຂອງທຸກປີ ເປັນວັນວິຈິດສິນແຫ່ງຊາດ ເພື່ອເປັນວັນເຕົ້າໂຮມຜູ້ປະກອບກິດຈະການ ແລະ ສິລະປິນ ດຳເນີນກິດຈະກຳຮ່ວມກັນເຊັ່ນ ຈັດງານມະຫາກຳດ້ານວິຈິດສິນ, ວາງສະແດງຜົນງານ ແລະ ຜະລິດຕະພັນສິນ, ຈັດກອງປະຊຸມສຳມະນາ, ແຂ່ງຂັນຜົນງານວິຈິດສິນຊີງລາງວັນຜົນງານດີເດັ່ນປະຈຳປີ ແລະ ກິດຈະກຳອື່ນ.

### ມາດຕາ 50. ເຄື່ອງໝາຍແລະຕາປະທັບຂອງວິຈິດສິນ

ວິຈິດສິນມີເຄື່ອງໝາຍ ແລະ ຕາປະທັບສະເພາະຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

## ໝວດທີ 12

## ບົດສຸດທ້າຍ

### ມາດຕາ 51. ການຈັດຕັ້ງປະຕິບັດ

ມອບໃຫ້ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 52. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະບານ ແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ